I. 3

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0075 /ອຄ.ກຂອ

ນະຄອນຫລວງວຽງຈັນ, ວັນທີ 13 ມັງກອນ 2012

# ຂໍ້ຕົກລົງ

## ວ່າດ້ວຍ ລະບຽບການຂໍອະນຸຍາດນຳເຂົ້າ ແລະ ການຈຳໜ່າຍລົດ ຢູ່ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍ ວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມດຳລັດວ່າດ້ວຍ ການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011; ແລະ
- ອີງຕາມດຳລັດ ວ່າດ້ວຍ ຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 7 ກໍລະກົດ 2009,

ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດລະບຽບການຂໍອະນຸຍາດນຳເຂົ້າ ແລະ ຈຳໜ່າຍລົດ ຢູ່ ສປປ ລາວ. ຂໍ້ຕົກລົງສະບັບນີ້ບໍ່ໄດ້ນຳໃຊ້ເພື່ອຈຸດປະສົງໃນການຈຳກັດປະລິມານ ຫຼື ມູນຄ່າໃນການນຳເຂົ້າ ແຕ່ເພື່ອຈຸດປະສົງໃນການເກັບກຳຂໍ້ມູນສະຖິຕິໃນການນຳເຂົ້າລົດ, ໂດຍຜ່ານລະບອບການອອກໃບອະນຸຍາດນຳເຂົ້າແບບອັດຕະໂນມັດ.

### ມາດຕາ 2. ອະທິບາຍຄຳສັບ

ໃນຂໍ້ຕົກລົງສະບັບນີ້ "ລົດ" ໝາຍເຖິງພາຫະນະທາງບົກຂັບເຄື່ອນດ້ວຍເຄື່ອງຈັກທຸກປະເພດ ຊຶ່ງໄດ້ລະບຸໄວ້ ໃນປຶ້ມສາລະບານອັດຕາພາສີຂອງ ສປປ ລາວ ດັ່ງ ນີ້: 8701.20; 8701.30.20; 8701.90; 8702; 8703; 8704; 8705 ແລະ 8711. ຍົກເວັ້ນລົດບັນທຸກເບົາຊະນິດ 3 ລໍ້ (8704.31.17).

### ມາດຕາ 3. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ ການນຳເຂົ້າ ແລະ ການຈຳໜ່າຍລົດ ຢູ່ ສປປ ລາວ.

## ໝວດທີ 2
## ສິດ ແລະ ເງື່ອນໄຂໃນການນຳເຂົ້າ ແລະ ຈຳໜ່າຍລົດ

### ມາດຕາ 4. ສິດ ແລະ ເງື່ອນໄຂໃນການນຳເຂົ້າລົດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ມີສິດນຳເຂົ້າລົດ ໂດຍປະຕິບັດຕາມ ລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

### ມາດຕາ 5. ສິດ ແລະ ເງື່ອນໄຂໃນການຈຳໜ່າຍລົດ

ມີແຕ່ ຜູ້ທີ່ຂຶ້ນທະບຽນວິສາຫະກິດຈຳໜ່າຍລົດ ພາຍໃຕ້ກົດໝາຍຂອງ ສປປ ລາວ ເທົ່ານັ້ນທີ່ ມີສິດຈຳໜ່າຍລົດຢູ່ ສປປ ລາວ.

ວິສາຫະກິດຈຳໜ່າຍລົດ ຕ້ອງປະຕິບັດຕາມ ຂໍ້ບັງຄັບດັ່ງນີ້:

1. ເປັນຕົວແທນຈຳໜ່າຍລົດ ຈາກຜູ້ຜະລິດລົດ ຫຼື ສາຂາຂອງຜູ້ຜະລິດລົດຍີ່ຫໍ້ໃດໜຶ່ງ;
2. ມີຮ້ານວາງສະແດງ ຫຼື ຮ້ານຈຳໜ່າຍລົດ; ແລະ
3. ມີສູນບໍລິການຫຼັງການຂາຍລົດ.

## ໝວດທີ 3
## ລະບຽບການຂໍອະນຸຍາດນຳເຂົ້າລົດ

### ມາດຕາ 6. ການຂໍອະນຸຍາດນຳເຂົ້າລົດ

ການນຳເຂົ້າລົດຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າລົດ ຈາກ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.

### ມາດຕາ 7. ເອກະສານປະກອບຂໍອະນຸຍາດນຳເຂົ້າລົດ

ເອກະສານທີ່ຕ້ອງປະກອບເພື່ອຂໍອະນຸຍາດນຳເຂົ້າລົດ ມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າລົດ;
2. ສຳເນົາຂອງເອກະສານຕາມແຕ່ລະກໍລະນີດັ່ງນີ້:
   - ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານທີ່ຍັງໃຊ້ໄດ້ (ສຳລັບວິສາຫະກິດ ທີ່ ຢູ່ ສປປ ລາວ); ຫຼື
   - ເອກະສານຂຶ້ນທະບຽນດຳເນີນທຸລະກິດ ອອກໃຫ້ໂດຍທາງການຂອງປະເທດກ່ຽວ ຂ້ອງທີ່ຍັງໃຊ້ໄດ້ (ສຳລັບວິສາຫະກິດທີ່ບໍ່ຢູ່ ສປປ ລາວ).

ເອກະສານທີ່ເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນ ຈາກ ສຳນັກງານທະບຽນສານຂອງ ສປປ ລາວ.

ມາດຕາ 8. ໃບອະນຸຍາດນຳເຂົ້າລົດ

ການອອກ, ການປ່ຽນແປງ ແລະ ອາຍຸ ຂອງ ໃບອະນຸຍາດນຳເຂົ້າລົດ ໃຫ້ປະຕິບັດຕາມດຳລັດ 180/ນຍ ລົງວັນທີ 7 ມິຖຸນາ 2009 ວ່າດ້ວຍຂັ້ນຕອນການ ອອກໃບອະນຸຍາດນຳເຂົ້າສິນຄ້າ. ໃບອະນຸຍາດນຳເຂົ້າລົດບໍ່ສາມາດໂອນໃຫ້ຜູ້ອື່ນໄດ້.

ມາດຕາ 9. ຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການອອກ ແລະ ການປ່ຽນແປງ ຂອງ ໃບອະນຸຍາດນຳເຂົ້າລົດແມ່ນໃຫ້ອີງຕາມລັດຖະບັນຍັດ ສະບັບເລກທີ 03/ປປທ ລົງວັນທີ 19 ພະຈິກ 2008 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

ມາດຕາ 10. ການສະໜອງເອກະສານໃນເວລານຳເຂົ້າລົດຕົວຈິງ

ໃນເວລານຳເຂົ້າຕົວຈິງ, ຜູ້ນຳເຂົ້າຕ້ອງສະແດງເອກະສານດັ່ງຕໍ່ໄປນີ້ໃຫ້ແກ່ເຈົ້າໜ້າທີ່ພາສີ:

1. ໃບອະນຸຍາດນຳເຂົ້າລົດທີ່ອອກພາຍໃຕ້ຂໍ້ຕົກລົງສະບັບນີ້; ແລະ
2. ເອກະສານອື່ນໆຕາມລະບຽບການຂອງພາສີ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

ມາດຕາ 11. ການຈັດຕັ້ງປະຕິບັດ

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ.

ມາດຕາ 12. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ 30 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການນຳເຂົ້າ ແລະ ການຈຳໜ່າຍລົດ ຢູ່ ສປປ ລາວ ສະບັບເລກທີ 0919/ອຄ.ກຂອ, ລົງວັນທີ 12 ພຶດສະພາ 2009.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ

ນຳສົ່ງ:
- ຫ້ອງວ່າການລັດຖະບານ;
- ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ;
- ກົມພາສີ, ກະຊວງການເງິນ;
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ;
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ